# ບົດຮຽນໂຮງຮຽນວັນອາທິດ
## ວັນອາທິດ ທີ 6 ມິຖຸນາ 2010 (6-6-2010)

---

## ເວລາຜູ້ນໍາຜິດພາດ

**ຂໍ້ພຣະຄັມພີໃນບົດຮຽນ:** 1 ຊາມູເອນ 2:22-25; 3:11-21

### ຜົນສະທ້ອນຕໍ່ຊີວິດ

ບົດຮຽນນີ້ຈະຊ່ວຍໜູນໃຈທ່ານຮັບໃຊ້ພຣະເຈົ້າຢ່າງສັດຊື່ໃນຖ້າມກາງຄົນອື່ນໆກະທໍາສິ່ງຕ່າງໆຢູ່ຮອບຂ້າງຕົວທ່ານ.

### ເປົ້າໝາຍຂອງບົດຮຽນ

ລູກຊາຍຂອງທ່ານເອລີເປັນປະໂຣຫິດທີ່ຊົ່ວຊ້າໄດ້ທໍາໃຫ້ພຣະເຈົ້າເສັຽພຣະທັຍ. ພຣະເຈົ້າໄດ້ສໍາແດງໃຫ້ເຫັນວ່າພຣະອົງຍັງມີອໍານາດປົກຄອງຢູ່ດ້ວຍການທີ່ນໍາເອົາຜູ້ປະກາດພຣະທັມທີສັດຊື່ຂຶ້ນມາແທນທີ່ພວກເຂົາ.

### ຄວາມສໍາຄັນຂອງບົດຮຽນ

ສິ່ງທີ່ເຮົາທໍາແລະວິທີເຮົາທໍາເພື່ອພຣະເຈົ້ານັ້ນມີປໂຍດ, ຖ້າພວກເຮົາລົ້ມເຫຼວຕໍ່ການທີ່ພຣະເຈົ້າໄດ້ມອບຄວາມໄວ້ວາງໃຈອັນສັກສິດຂອງພຣະອົງໃຫ້ແກ່ພວກເຮົານັ້ນ, ພຣະອົງກໍຈະຊອກຫາຜູ້ຮັບໃຊ້ຄົນອື່ນທີ່ຊື່ສັດນັ້ນເຮັດວຽກຕາມນໍ້າພຣະທັຍຂອງພຣະອົງແທນເຮົາ.

**ການສຶກສາພຣະຄັມພີ**

ທຸກຄົນເຄີຍໄດ້ຍິນກ່ຽວກັບເຣື່ອງຂອງຜູ້ນໍາທີ່ຕົກເປັນເຫຍື່ອຂອງຄວາມອະທັມແລະຄວາມຊົ່ວ. ຈະບໍ່ມີສັງຄົມໃດທີ່ຈະຫລີກພົ້ນຈາກການລົ້ມເຫຼວໄດ້ເລີຍ, ພວກທຸຣະກິດທະນາຄານກໍມີສ່ວນໃນບ່ອນພວກຜູ້ນໍາໄດ້ທໍາການລົ້ມເຫຼວ, ໃນດ້ານການເມືອງກໍມີເຣື່ອງທີ່ບໍ່ດີເກີດຂຶ້ນມາທຸກໆປີ. ເຖິງແມ່ນໂບດກໍບໍ່ພົ້ນຈາກການລົ້ມເຫຼວ, ພວກສິດຍາພິບານ ແລະຜູ້ນໍາຫຼາຍຄົນກໍຕົກໄປຢູ່ໃນຄວາມບາບແລະກາຍເປັນຕົວຢ່າງທີ່ບໍ່ດີຂອງການເປັນຜູ້ນໍາທີ່ຄວນຈະເປັນ.

ບົດຮຽນໃນມື້ນີ້ຈະໄດ້ພິສູດໃຫ້ເຫັນຊີວິດລູກຊາຍທັງສອງຂອງທ່ານເອລີ ທີ່ປາກົດຢູ່ໃນພຣະຄັມ 1 ຊາມູເອນທີ່ເປັນປະໂຣຫິດທີ່ໄດ້ຍິນຄໍາຮ້ອງໄຫ້ຂອງນາງ ຮັນນາ. ທ່ານຍັງເປັນຜູ້ລ້ຽງດູ ທ່ານຊາມູເອນໃຫ້ເປັນຜູ້ຮັບໃຊ້ຂອງພຣະເຈົ້າ. ເຖິງຢ່າງໃດກໍຕາມ, ທ່ານ ເອລີ ໄດ້ລົ້ມເຫຼວໃນການລ້ຽງລູກໃຫ້ເດີນຕາມພຣະເຈົ້າ, ນີ້ເປັນການລົ້ມເຫຼວທາງສິນທັມຂອງຕົວລາວພ້ອມກັນນັ້ນກໍເປັນການລົ້ມເຫຼວຂອງລູກຊາຍລາວໄປພ້ອມກັນ.

### 1. <u>ຄວາມໄວ້ວາງໃຈອັນສັກສິດຖືກທໍາລາຍ</u>: 1 ຊາມູເອນ 2:22-25

ພຣະເຈົ້າໄດ້ມອບຄວາມໄວ້ວາງໃຈອັນສັກສິດໄວ້ກັບທ່ານເອລີພ້ອມຄອບຄົວໃຫ້ເປັນປະໂຣຫິດໃນການຮັບໃຊ້ພຣະອົງ. ການຮຽກເອີ້ນໄດ້ເອົາພວກເຂົາໃຫ້ຕັ້ງຢູ່ໃນຖານະຂອງຄວາມນັບຖືສູງແລະບໍຣິສຸດ, ທ່ານ ເອລີໄດ້ຖືເອົາ

ຄວາມຈິງຈັງຕໍ່ຖານະນີ້ ແຕ່ລູກຊາຍຂອງລາວຊື່ ໂຮບນີ ແລະ ຟີເນຮາ ບໍ່ໄດ້ສົນໃຈເລີຍ. ເວລາທ່ານ ເອລີ ເຖົ້າແກ່ລົງ, ທ່ານໄດ້ຍິນຂ່າວລືກ່ຽວກັບຄວາມຊົ່ວທີ່ລູກຊາຍຂອງທ່ານໄດ້ເຮັດຢູ່ປະຕູທາງເຂົ້າວິຫານຜ້າເຕັນຂອງການປະຊຸມ.

ລູກຊາຍຂອງທ່ານ ເອລີ ໄດ້ເຮັດຄວາມຊົ່ວຮ່ວມສູ່ທາງເພດຢູ່ໃນສະຖານທີ່ນະມັສການກັບຍິງຜູ້ທີ່ເປັນຂ້າຮັບໃຊ້ຢູ່ທີ່ນັ້ນ. ຜູ້ຍິງເຫຼົ່ານີ້ອາດຈະເປັນຄົນກຸ່ມ ນາຊາໄຣ ທີ່ອາສາສມັກຖວາຍເວລາຮັບໃຊ້ໃນວິຫານ (ອົພຍົບ 38:8; ຈສບຊ 6:2). ພວກຄົນທີ່ທ່ານ ເອລີ ຮັບໃຊ້ເປັນຜູ້ບອກທ່ານເຖິງຄວາມປະພຶດຂອງລູກຊາຍລາວ. ທ່ານ ເອລີ ຈົ່ມຮ້າຍຕິຕຽນຕໍ່ຄວາມຊົ່ວທີ່ທຳລາຍການໄວ້ວາງໃຈອັນສັກສິດຂອງພຣະເຈົ້າ ແລະສະແດງຄວາມເສັຽໃຈກັບແພງທີ່ທ່ານເອງບໍ່ສາມາດທີ່ຈະປ່ຽນແປງການກະທຳຂອງລູກຊາຍ. ຄົນຜິດຕ້ອງອອກມາສາຣະພາບຄວາມຜິດບາບຂອງຕົນເອງຕໍ່ໜ້າພຣະພັກຂອງພຣະເຈົ້າ.

ພວກລູກຊາຍບໍ່ຍອມຟັງຄວາມພໍ່, ພຣະເຈົ້າຕ້ອງການຂ້າພວກເຂົາ. ພວກເຂົາໄດ້ລະເມີດຕໍ່ພຣະບັນຍັດສິບປະການບາງຂໍ້. ເພາະວ່າໃນຖານະຂອງເຂົາ, ພວກເຂົາຈະຮັບໃຊ້ເປັນຕົວຢ່າງທີ່ບໍ່ດີຕໍ່ການທີ່ພຣະເຈົ້າໄດ້ໃຫ້ຄຸນຄ່າຂອງຄວາມບໍຣິສຸດ ໂດຍສະເພາະແລ້ວແມ່ນສຳລັບພວກຜູ້ທີ່ພຣະເຈົ້າໄດ້ປະທານຄວາມໄວ້ວາງໃຈອັນສັກສິດ. ພຣະເຈົ້າບໍ່ໄດ້ໃຫ້ຄວາມບໍ່ເປັນທັມຕໍ່ເຂົາ; ພຣະອົງໄດ້ເອົາສິ່ງທີ່ພວກເຂົາຄວນໄດ້ຮັບໃຫ້ພວກເຂົາ. ຂອບຄຸນພຣະເຈົ້າທີ່ພຣະເຈົ້າບໍ່ໄດ້ເອົາສິ່ງທີ່ເຮົາຄວນໄດ້ຮັບໃຫ້ພວກເຮົາຕລອດໄປ. ໂດຍຜ່ານທາງພຣະໂລຫິດຂອງພຣະເຢຊູ, ພຣະອົງປະທານແຕ່ສິ່ງທີ່ດີກ່ວາພວກເຮົາຄວນໄດ້ຮັບ ໃຫ້ພວກເຮົາ.

ຄວາມໄວ້ວາງໃຈອັນສັກສິດປະກອບດ້ວຍຫຼາຍແນວກວ່າການຮຽກເອີ້ນໄປຮັບໃຊ້ເໝືອນລູກຊາຍຂອງທ່ານເອລີ. ພຣະເຈົ້າປະທານຄວາມໄວ້ວາງໃຈອັນສັກສິດໃຫ້ແກ່ຄູ່ຜົວເມັຽໃນເວລາທີ່ພວກເຂົາໄດ້ສັນຍາແຕ່ງງານຕໍ່ໜ້າພຣະພັກພຣະເຈົ້າ. ພຣະເຈົ້າໄດ້ວາງໜ້າທີ່ຮັບຜິດຊອບອັນສັກສິດໃຫ້ພໍ່ແມ່ເປັນຜູ້ນຳເອົາຊີວິດນຶ່ງເຂົ້າມາໃນໂລກ. ພໍ່ແມ່ເປັນບໍ່ເກີດຂອງການເຕີບໂຕຂອງຮ່າງກາຍແລະການເປັນຜູ້ໃຫຍ່ທາງຈິດໃຈຂອງພວກລູກ. ການປ່ອຍປະລະຖິ້ມຕໍ່ການໄວ້ວາງໃຈອັນສັກສິດນັ້ນຈະນຳຜົນສະທ້ອນອັນໜ້າຢ້ານມາເຖິງຄອບຄົວແລະສັງຄົມ. ບາງທີ ທ່ານ ເອລີ ໄດ້ປະລະໜ້າທີ່ຮັບຜິດຊອບຕອນຍັງໜຸ່ມ ແລະເວລາເຖົ້າແກ່ຈຶ່ງໄດ້ພຍາຍາມແກ້ໄຂປ່ຽນແປງລູກຊາຍຂອງລາວ.

ຄົນທັງຫລາຍທີ່ໄດ້ຮັບຄວາມໄວ້ວາງໃຈອັນສັກສິດໃນສັງຄົມເຮົາມີ: ນັກການເມືອງໄດ້ຮັບຄວາມເຊື່ອໃຈອັນສັກສິດຈາກພຣະເຈົ້າແລະພວກປະຊາຊົນທີ່ພວກເຂົາປົກຄອງ, ພວກນາຍຄຣູໄດ້ຮັບຄວາມໄວ້ວາງໃຈອັນສັກສິດລະຫວ່າງການຮຽກເອີ້ນໃນຊີວິດຂອງພວກເຂົາແລະນັກຮຽນທີ່ພວກເຂົາສິດສອນ. ການລະເມີດຕໍ່ການໄວ້ວາງໃຈອັນສັກສິດນັ້ນເປັນການກະທຳອັນໜ້າຢ້ານອັນໂຫດຫ້ຽມໃນສັງຄົມຂອງເຮົາປັດຈຸບັນ. ສຳລັບຜູ້ທີ່ທຳລາຍລະເມີດຕໍ່ຖານະຄວາມຮັບຜິດຊອບ ເຖິງຈະເປັນທາງດ້ານສາສນາ ຫຼື ທາງໂລກກໍຕາມ ຈະໄດ້ນຳສັງຄົມມາພົບກັບພຣະພິໂຣດ ຂອງພຣະເຈົ້າ ແລະ ເຖິງຜົນສະທ້ອນທີ່ເສັຽຫາຍອັນໃຫ່ຽຫລວງ.

## 2. <u>ພຣະເຈົ້າຈະເຮັດສິ່ງທີ່ພຣະອົງຄິດວ່າດີ</u>: 1 ຊາມູເອນ 3:11-18

ທ່ານ ເອລີ ໄດ້ຮູ້ເຫັນລ່ວງໜ້າກ່ຽວຈຸດຈົບອັນຕລາຍໃນຄວາມບາບຂອງລູກຊາຍ (1ຊມອ 2:25), ໄດ້ຍິນຄຳປະກາດຂອງຜູ້ປະກາດພຣະທັມກ່ຽວກັບສິ້ນສຸດໃນຄອບຄົວເຊື້ອສາຍຂອງລາວ, ແລະ ເວລານີ້ ທ່ານໄດ້ຮັບຄຳຕອບໂດຍຕົງຈາກຜູ້ຮັບໃຊ້ຄື ທ່ານຊາມູເອນ. ເວລາພຣະເຈົ້າໄດ້ເປີດເຜີຍຂໍ້ຄວາມນີ້ທຳອິດໃຫ້ແກ່ທ່ານຊາມູເອນ, ພຣະອົງໄດ້ເຕືອນວ່າການກະທຳຂອງພຣະອົງຈະທຳໃຫ້ຄົນຕົກໃຈ. ເຫດຜົນຂອງຄວາມຮຸນແຮງຂອງພຣະເຈົ້ານັ້ນເປັນສອງເທົ່າຄື: ການກະທຳຂອງລູກຊາຍທ່ານໃນສະຖານທີ່ພວກເຂົາຮັບໃຊ້ພຣະເຈົ້າທີ່ຫໍຜ້າເຕັນຊຸມນຸມນັ້ນເປັນການທີ່ທາຂໍ້

ແກ້ຕົວບໍ່ໄດ້ ແລະ ການທີ່ທ່ານ ເອລີ ເອງຂາດການປະຕິບັດຕິດຕາມກົດຂອງໂມເຊ ສຳລັບລູກທີ່ບໍ່ຟັງຄວາມເປັນການທີ່ຮັບບໍ່ໄດ້ສຳລັບປະໂຣຫິດ ຜູ້ທີ່ສົມຄວນເປັນຜູ້ທີ່ຕັ້ງຢູ່ໃນມາດຕະຖານ. ກົດຂອງໂມເຊໄດ້ເວົ້າເຖິງລູກທີ່ບໍ່ຟັງຄວາມພໍ່ແມ່ ແລະເສີຍເມີຍຕໍ່ຄວາມທີ່ພໍ່ແມ່ເຕືອນໃຫ້ເຊົາຈາກການທຳຊົ່ວທີ່ທຳລາຍຕົນເອງ (ພບຍ 21:18-21). ພຣະເຈົ້າຈະເອົາເຣື່ອງກັບຜູ້ນັ້ນທີ່ຈະບໍ່ມີເຄື່ອງຖວາຍບູຊາອັນໃດສາມາດໄຖ່ລົບລ້າງໄດ້. ຕາບໃດທີ່ລູກຂອງທ່ານຍັງຫົວແຂງດຳເນີນຕໍ່ໃນການກະທຳຂອງເຂົາ ແລະ ທ່ານ ເອລີ ເອງຫຼຽວໜ້າໄປທາງໃໝ່ ຄວາມຫວັງທີ່ຈະໄດ້ຮັບການໃຫ້ອະພັຍຈາກພຣະເຈົ້ານັ້ນກໍຈະບໍ່ມີເລີຍ.

ທ່ານ ຊາມູເອນ ມີຄວາມລຳບາກໃຈທີ່ຈະບອກອະທິບາຍຂໍ້ຄວາມທີ່ໄດ້ມາໃຫ້ແກ່ຜູ້ທີ່ທ່ານນັບຖື. ຄົນເຮົາຕ້ອງການຄວາມໝູນໃຈທີ່ຈະຕ້ອງປະເຊີນໜ້າບອກກັບພີ່ນ້ອງທີ່ໄດ້ທຳຄວາມບາບ ທ່ານ ເອລີ ໄດ້ເອີ້ນ ຊາມູເອນໄປຫາ ແລະເບິ່ງຄືທ່ານພ້ອມແລ້ວທີ່ຈະຕ້ອງຟັງສິ່ງທີ່ບໍ່ດີຈະເກີດຂຶ້ນຈາກພຣະເຈົ້າ. ທ່ານ ເອລີ ຫ້າມບໍ່ໃຫ້ ຊາມູເອນ ປິດບັງຄວາມຈິງອັນໃດຈາກລາວ ທ່ານບໍ່ຕ້ອງການໃຫ້ພຣະເຈົ້າລົງໂທດ ທ່ານ ຊາມູເອນ ເໝືອນກັນກັບທີ່ພຣະເຈົ້າກຳລັງຈະໃຫ້ຕົນເອງຮັບໂທດໃນການຕົນເອງທີ່ໄດ້ປ່ອຍປະຕໍ່ໜ້າທີ່ຮັບຜິດຊອບ.

ເວລາ ທ່ານ ຊາມູເອນ ປ່ອຍຂ່າວຮ້າຍໃຫ້ທ່ານ ເອລີ ກໍຮັບເອົາສິ່ງທີ່ພຣະເຈົ້າປະກາດ, ທ່ານຕອບຮັບເອົາໂດຍເວົ້າວ່າ ພຣະອົງເປັນພຣະເຈົ້າ. ເຖິງແມ່ນພຣະເຈົ້າບໍ່ໄດ້ເວົ້າສິ່ງຊົ່ວຮ້າຍວິທີດຽວກັນ, ພຣະອົງຜູ້ດຽວທີ່ສາມາດຕັດສິນໃຈວ່າການລົງໂທດແບບໃດເໝາະສົມຕໍ່ຄວາມຕ້ອງການຂອງມະນຸດ--ພຣະອົງຈະເຮັດໃນສິ່ງທີ່ພຣະອົງຄິດວ່າດີ. ການລົງໂທດຂອງພຣະເຈົ້າຍຸດຕິທັມ; ຄວາມຕັ້ງໃຈຂອງພຣະເຈົ້ານັ້ນດີ. ການກະທຳຂອງ ໂຮບນີ ແລະ ຟີເນຮາໄດ້ນຳຄວາມອັບອາຍຂາຍໜ້າມາສູ່ຄອບຄົວຂອງທ່ານ ເອລີ ແລະ ປະເທດ. ທ່ານ ເອລີ ຄິດວ່າ ການທີ່ພຣະເຈົ້າໄດ້ຍົກເອົາພວກເຂົາອອກຈາກການນຳທີ່ບໍ່ດີນັ້ນ ກໍດີກວ່າທີ່ຈະປ່ອຍໃຫ້ພວກເຂົາດຳເນີນເປັນຕົວຢ່າງບໍ່ດີຕໍ່ໄປ. ອີງຕາມບົດຮຽນນີ້, ພໍ່ແມ່ອາດຈະຢ້ານກົວຕໍ່ຄວາມຄິດທີ່ວ່າຈະເຮັດແນວໃດຕໍ່ລູກທີ່ບໍ່ຟັງຄວາມ. ບໍ່ເໝືອນກັນກັບທ່ານ ເອລີ, ພໍ່ແມ່ບໍ່ຄວນນັ່ງເມີນເສີຍ ແລະນັ່ງເບິ່ງລູກທີ່ກຳລັງມຸ່ງໜ້າໄປທາງທີ່ຜິດ. ພວກເຂົາຄວນປະເຊີນໜ້າບອກສອນ, ຝຶກອົບຮົມ, ອ້ອນວອນອະທິຖານ, ສະແດງຄວາມຮັກ, ແລະຫວັງວ່າ ຕາບໃດທີ່ພວກເຂົາຍັງມີຊີວິດຢູ່ ຄວາມຫວັງຍັງມີວ່າພວກເຂົາຈະຫັນຫຼັງໃຫ້ຄວາມບາບຂອງເຂົາ ແລະ ກັບຄືນຫັນໜ້າເຂົ້າມາຫາພຣະເຈົ້າ.

### 3. <u>ພຣະເຈົ້າຍັງດຳເນີນປະກາດພຣະຄຳຂອງພຣະອົງ</u>: 1 ຊາມູເອນ 3:19-21

ພຣະເຈົ້າຊົງຍັງມີຜູ້ນຳທີ່ເຊື່ອຟັງພຣະຄຳຂອງພຣະອົງແລະຕິດຕາມການນຳພາຂອງພຣະອົງ. ທ່ານ ຊາມູເອນ ດຳເນີນຕໍ່ເຕີບໂຕໃນການຕິດຕາມໃຊ້ຊີວິດກັບພຣະເຈົ້າ; ເວລາທ່ານເວົ້າຫຍັງ ພວກຄົນສາມາດມີຄວາມໝັ້ນໃຈວ່າເປັນຄວາມຈິງ. ຜູ້ນຳສ່ວນຫຼາຍໃນສມັຍນີ້ມີອຳນາດປົກຄອງຂົງເຂດທີ່ນ້ອຍໃນດິນແດນທີ່ພຣະເຈົ້າໄດ້ສັນຍາໄວ້. ທ່ານ ຊາມູເອນ ມີອຳນາດປົກຄອງດິນແດນທົ່ວອິດສຣາເອັນແຕ່ເໜືອຫາໃຕ້ ຈາກເຂດທີ່ເອີ້ນວ່າ ແດນ ຈົນເຖິງເຂດເບັເຊບາ.

ບາງຄັ້ງເມື່ອມີຜູ້ນຳຄຣິສຕຽນທຳຄວາມລົ້ມເຫຼວກໍທຳໃຫ້ຊື່ສຽງຂອງການຮັບໃຊ້ເສັຽໄປ. ເຖິງຢ່າງໃດກໍຕາມ, ພວກເຮົາບໍ່ຄວນໃຫ້ຄວາມລົ້ມເຫຼວຂອງພວກເຂົາທຳລາຍພຣະຄຳຂອງພຣະເຈົ້າ. ຜູ້ນຳທີ່ລົ້ມເຫຼວຈະນຳຄວາມອັບອາຍຂາຍໜ້າໃສ່ພວກເຂົາເອງ ບໍ່ຄວນສະເທືອນມາເຖິງພຣະເຈົ້າ. ພຣະຄຳຂອງພຣະເຈົ້າມີເປັນຄວາມຈິງ ແລະພຣະກຳລັງອຳນາດຂອງພຣະເຈົ້າຍັງຄົງຢູ່ເໝືອນເດີມ. ພວກເຮົາບໍ່ຄວນໃຊ້ຄວາມລົ້ມເຫຼວຂອງຜູ້ນຳຄົນອື່ນໆມາເປັນຂໍ້ແກ້ໃນ ຄວາມຜິດຂອງເຮົາເອງ. ເມື່ອເວລາມີຜູ້ນຳທີ່ໃຊ້ອຳນາດຂອງເຂົາຜິດທາງ ຫຼື ເມີນເສີຍຕໍ່ຄວາມບໍຣິສຸດຂອງພຣະ

ເຈົ້າ ໃຫ້ຍ້າຍເຂົາອອກຈາກໂບດເສັ່ງ, ພວກເຮົາຄວນຍອມຮັບເອົາ ການນໍາພາຂອງຄົນໃໝ່ທີ່ພຣະເຈົ້າຕັ້ງຂຶ້ນ--ປາສ ຈາກການດຶງເອົາຊີວິດທີ່ຜິດຂອງຜູ້ນໍາຄົນເກົ່າມາສູ້ກັບຜູ້ນໍາຄົນໃໝ່.

ທ່ານ ຊາມູເອນ ຖືກຢໍ້າວ່າເປັນຜູ້ປະກາດພຣະທັມຂອງພຣະເຈົ້າ, ທ່ານບໍ່ໄດ້ຮັບຄວາມໄວ້ວາງໃຈອັນສັກສິດ ດ້ວຍກໍາເນີດຢູ່ໃນຄອບຄົວຂອງປະໂລຫິດ ແຕ່ດ້ວຍຖືກພຣະເຈົ້າຮຽກເອີ້ນເອົາໃນຊີວິດຂອງລາວ. ເຫດຜົນໃນຄວາມ ສໍາເຣັດໃນຖານະຜູ້ນໍາຂອງທ່ານມີສອງເທົ່າ. ທີນຶ່ງ, ພຣະເຈົ້າໄດ້ຕໍ່ເນື່ອງໃນປາກົດການຕໍ່ທ່ານທີ່ ຊີໂລ, ທ່ານປະຕິບັດ ຕໍ່ການປະທັບຂອງພຣະດ້ວຍສຸດກໍາລັງ. ທີສອງ, ພຣະເຈົ້າຊົງທໍາການເປີດເຜີຍພຣະອົງເອງຕໍ່ ຊາມູເອນ ດ້ວຍພຣະ ຄໍາຂອງພຣະອົງ. ຫລັກການແບບດຽວກັນທີ່ໃຫ້ກັບພວກເຮົາໂດຍຜ່ານທາງພຣະຄັມພີ.

## ບົດຮຽນຊີວິດ:

ເຖິງແມ່ນຜູ້ນໍາບາງຄົນໄດ້ຕົກຕໍ່າລົ້ມເຫຼວໄປ, ຄວາມເຊື່ອຂອງເຮົາຄວນຢູ່ໃນພຣະເຈົ້າ ບໍ່ແມ່ນຢູ່ໃນ ຜູ້ນໍາທີ່ນໍາພາພວກເຮົາ. ພວກເຮົາຕິດຕາມພວກເຂົາຕາບໃດທີ່ພວກເຂົາຍັງຕິດຕາມພຣະເຈົ້າຢູ່. ຖ້າວ່າ ພວກເຂົາລົ້ມ, ພຣະເຈົ້າຍັງໝັ້ນຄົງຢູ່ໃນຊີວິດຂອງເຮົາ.

ແມ່ນຫຍັງເປັນບົດຮຽນໃຫ້ແກ່ເຮົາໃນຊີວິດຂອງທ່ານ ເອລີ, ລູກຊາຍຂອງທ່ານ, ແລະ ຊາມູເອນ.

- ຈົ່ງໃຊ້ເວລາເນັ້ນໜັກຮັບຮູ້ເອົາຜູ້ນໍາທີ່ຢູ່ຮອບຂ້າງຂອງທ່ານຜູ້ທີ່ນໍາພາດ້ວຍຄຸນທັມອັນໝັ້ນຄົງຈິງໃຈ. ບາງ ຄັ້ງ ຂ່າວຕ່າງໆກ່ຽວກັບຜູ້ນໍາທີ່ລົ້ມເຫຼວພາໃຫ້ພວກເຮົາລືມວ່າຍັງມີຜູ້ນໍາຫຼາຍຄົນຍັງທໍາໜ້າທີ່ການນໍາຢ່າງດີ. ຈົ່ງ ລອງຕັ້ງໃຈຂຽນລາຍການຜູ້ນໍາທີ່ດີໃສ່ເຈັ້ຽອອກມາເພື່ອເນັ້ນເບິ່ງຄົນທີ່ເປັນຜູ້ນໍາທີ່ດີໃນຊີວິດຂອງທ່ານ.
- ຈົ່ງທົດສອບເບິ່ງຄວາມໄວ້ວາງໃຈອັນສັກສິດໃນຊີວິດຂອງທ່ານ. ທ່ານໄດ້ເຮັດຢ່າງໃດກັບຄວາມໄວ້ວາງໃຈ ທີ່ ພຣະເຈົ້າໄດ້ປະທານໃຫ້ແກ່ທ່ານແລ້ວ? ທ່ານໄດ້ເຮັດພາຣະໜ້າທີ່ຮັບຜິດຊອບຢ່າງດີຕໍ່ໜ້າທີ່ກ່ຽວກັບການ ເປັນ ຄູ່ຄອງສົມຣົດ, ພໍ່ແມ່, ຫຼື ຜູ້ນໍາທີ່ທໍາງານ ແລ້ວບໍ່? ມີຫຍັງແດ່ທີ່ທ່ານສາມາດທໍາໃຫ້ດີຂຶ້ນກວ່າເກົ່າສໍາ ລັບໜ້າທີ່ ທີ່ທ່ານໄດ້ຮັບ ກັບຄວາມໄວ້ວາງໃຈອັນສັກສິດເຫຼົ່ານີ້?
- ໃຫ້ກວດກາເບິ່ງ ວິທີທາງທີ່ພຣະເຈົ້າໄດ້ພິສູດພຣະອົງເອງວ່າດີໃນຊີວິດຂອງທ່ານ. ບໍ່ແມ່ນແຕ່ຂຽນລາຍການ ທີ່ພຣະອົງອວຍພອນເທົ່ານັ້ນ, ແຕ່ໃຫ້ຄິດເຖິງສິ່ງທີ່ພຣະອົງໄດ້ຕິສອນຝຶກແອບຊີວິດຂອງທ່ານເໝືອນກັນ. ຈົ່ງ ຊອກຫາວິທີທາງຂຍາຍຄວາມດີຂອງພຣະເຈົ້າໃນຊີວິດຂອງທ່ານ.

ສິດຍາພິບານໃໝ່ທີ່ຕິດຕາມສິດຍາພິບານທີ່ມີປະສົບການຫລາຍປີແລະເຕັມໄປດ້ວຍຄົນທີຮັກຫອມໃນໂບດນັ້ນ ຈະມີຄວາມຫຍຸ້ງຍາກຫຼາຍ. ມີຫລາຍຄົນຕັດສິນຜູ້ນໍາປັດຈຸບັນດ້ວຍປຽບທຽບໃສ່ຜູ້ທີ່ຜ່ານມາແລ້ວ, ແລະກໍເປັນການ ຍາກທີ່ຜູ້ໃໝ່ຈະໃຊ້ ຊີວິດ ໃຫ້ເປັນເໝືອນກັນກັບຜູ້ເກົ່າ. ເຖິງຢ່າງໃດກໍຕາມ, ອີກຝ່າຍນຶ່ງກໍເປັນຈິງເໝືອນກັນ ສິດຍາ ພິບານທີ່ຕິດຕາມເຮັດວຽກ ຮັບໃຊ້ກັບການປົກຄອງທີ່ຂາດສິນທັມກໍມີຄວາມຫຍຸ້ງຍາກເໝືອນກັນ. ບາງຄັ້ງ ຄົນເຮົາກໍ ໝົດຄວາມໄວ້ໃຈ ຫຼື ບໍ່ພໍໃຈທີ່ຈະອຸທິດຖວາຍຕົນ ເພາະວ່າພວກເຂົາໄດ້ຜ່ານຄວາມເຈັບປວດມາກ່ອນ. ບົດຮຽນນີ້ໄດ້ ຊ່ວຍໜູນໃຈພວກເຮົາໃຫ້ໄວ້ວາງໃຈໃນພຣະເຈົ້າ ໃຫ້ຕິສອນຝຶກແອບຜູ້ນໍາຂອງພຣະອົງ, ຍັງໜູນໃຈພວກເຮົາໃຫ້ ສ່ຽງ ຕໍ່ການໄວ້ວາງໃຈອີກຄັ້ງນຶ່ງ ເມື່ອພວກເຮົາໄດ້ມີຜູ້ນໍາທີ່ຢູ່ຮອບຂ້າງພວກເຮົາໄດ້ລົ້ມເຫຼວໄປ

ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org ໂດຍ BS